# ປະກາດຂອງສມາຄົມ ລາວ-ອະເມຣິກັນ

ວັນທີ່ 22 ຕຸລາ 2007

ເຖີງ: ສມາຊິກສະມາຄົມ ລາວອະເມຣິ ກັນ (ສລອ)

ເຣື່ອງ: ການດັດແປງ, ແກ້ໄຂ ກົດລະບຽບພາຍໃນ ສລອ.

1. **ການສມັກເຂົ້າເປັນສະມາຊິກ ສລອ**
2. **ການປະຕິບັດ ເມື່ອມີສະມາຊິກໃນຄອບຄົວເສັຽຊີວິດ.**
3. **ການຈ່າຍເງິນຊາປະນະກິຈສົງເຄາະໃຫ້ຄອບຄົວສະມາຊິກເສັຽຊີວິດ**
4. **ການປັບໄໝ ເມື່ອມີການລະເມີດ, ບໍ່ປະຕິບັດຕາມກົດລະບຽບ.**

ກອງປະຊຸມກັມມະການບໍຣິຫານສະມາຄົມ ໂດຍມີ ຂ້າພະເຈົ້າ, **ສວັນນິມິຕ ອະພັຍ** ປະທານສະມາຄົມນັ່ງ ເປັນປະທານ ຊ້ອງໜ້າທີ່ປຶກສາຂອງສະມາຄົມ ໄດ້ມີມະຕິ ເຫັນດີ ໃຫ້ດັດແປງ ແກ້ໄຂ ກົດລະບຽບພາຍໃນ ຂອງສະມາຄົມ ບາງມາຕຣາໃໝ່. ຊຶ່ງ ມີລາຍລະອຽດ ດັ່ງນີ້:

**1. ການສມັກເຂົ້າເປັນສະມາຊິກ ສລອ** .ໃບຄຳຮ້ອງ,ຕ້ອງຍື່ນຜ່ານຫົວໜ້າຄຸ້ມ. ຖ້າບໍ່ມີຫົວໜ້າຄຸ້ມ ຈະສົ່ງໃຫ້ສຳນັກງານ ສລອ.ໂດຍກົງກໍໄດ້. ທີ່ Lao American Association (LAA) 323 Remington Ridge Dr, Houston, TX 77073 ພ້ອມທັງເງິນ ຄ່າທັມນຽມ **(New Application processing)** ຄອບຄົວລະ$ 50, ຄ່າເປັນສະມາຊິກຕລອດຊີວິດ ທ່ານລະ $ 5**(Membership Fee 18 and Over each Modify)**,(ເກັບຄັ້ງດຽວ) ຄ່າບຳຣຸງສະມາຄົມປະຈຳປີ ຄອບຄົວລະ $30 **(Annual Membership Fee** ເກັບປີລະຄັ້ງ) ເກັບລ່ວງໜ້າ ຊາປນະກິຈສົງເຄາະ (ອາຍຸ 18 ປີ Funeral Fee 18 and Over) ທ່ານລະ $10(ເກັບເມື່ອມີສະມາຊິກຕາຍ)
(ຕົວຢ່າງ: ຄອບຄົວ ມີສະມາຊິກ 6 ຄົນ. ອາຍຸ 18 ປີຂຶ້ນໄປມີ 4 ຄົນ ຈະຕ້ອງຈ່າຍ $ 130. ເງິນຈຳນວນດັ່ງກ່າວ ຖ້າຫາກ ທ່ານບໍ່ຖືກຮັບເປັນ ສະມາຊິກ. ສະມາຄົມຈະສົ່ງຄືນ ໂດຍບໍ່ມີການຫັກຄ່າໃຊ້ຈ່າຍໃດໆເລີຍ)

Note: Account Holder $95.00 for Each Family Member Add $15 Each

- New Application Fee...$50.00
- Annual Membership Fee ...$30.00
- Membership Fee 18 and Over (for each time Update your File) ...$5.00
- Contribution Support (Funeral Fee 18 and Over) ...$10.00

2. ເມື່ອມີສະມາຊິກໃນຄອບຄົວ ເສັຽຊີວິດ ຕ້ອງແຈ້ງໃຫ້ LAA Office (281) 443 7770 ປະທານ ຫລື ຮອງປະທານສະມາຄົມຊາບ ທີ່ເລກໂທຣ: Cell 832-715-3421 ເພື່ອຈະໄດ້ ຊ່ອຍຕິດຕໍ່ "ຊາປນະກິຈສະຖານ" ຫລື Funeral Home, ຊ່ອຍຂຽນໃບແຈ້ງຂ່າວມໍຣະນະກັມ ແລະ ຊີວະປະວັດ ເພື່ອອ່ານໃນມື້ພິທີຊາປນະກິຈສົພ.

3. ການຈ່າຍເງິນຊາປະນະກິຈສົງເຄາະໃຫ້ຄອບຄົວສະມາຊິກເສັຽຊີວິດ ສະມາຄົມຈະຈ່າຍຕາມຈຳນວນສະມາຊິກ ແຕ່ຈະຫັກຄ່າໃຊ້ຈ່າຍຕ່າງໆ ໄວ້ 10 ເປີເຊັນ. ( ຄ່າພິມ, ຄ່າສະແຕມ ສົ່ງໃບແຈ້ງຂ່າວມໍຣະນະກັມ,ຄ່າພາຫນະການຕິດຕໍ່, ຫົວໜ້ານຳພິທີສາສນາ, ຄ່າພວງມາລາ, ຄ່າຖ່າຍຮູບແຈ້ງຂ່າວທາງ Internet. ຈຳນວນທີ່ເຫລືອ ບຳຣຸງສະມາຄົມ.) ຂໍແຈ້ງໃຫ້ທ່ານຊາບອີກວ່າ Funeral Home ຫລຸດຄ່າຊາປນະກິຈສົພ- ໃຫ້ສະມາສະມາຊິກ ສະມາຄົມ 20% ສະນັ້ນ, ເງິນທີ່ສະມາຄົມຫັກ 10% ນັ້ນ ຈຶ່ງເທົ່າກັບເຄິ່ງໜຶ່ງ ຂອງສ່ວນຫລຸດທັງໝົດ)

4. <u>ການຈ່າຍເງິນຊາປນະກິຈສົງເຄາະ ເມື່ອສະມາຊິກເສັຽຊີວິຕ:</u>

ຈ່າຍໃຫ້ຫົວໜ້າຄຸ້ມ ພາຍໃນ 2 ອາທິຕ ຫລັງຈາກນັ້ນ. ຕ້ອງ ຈ່າຍໃຫ້ກັມມະການ ສລອ ໂດຍກົງ ຫລື ຝາກເຊັຄ ຫລື Money Order ທາງໄປສະນີ ໂດຍແຈ້ງ ເລກປະຈໍາຄອບຄົວຂອງທ່ານ(Account Number) ແລະ ຊື່ສະມາຊິກຜູ້ເສັຽຊີວິຕ ລົງໃນເຊັຄ ຫລື ຈະຈ່າຍຜ່ານທາງ Internet (online go to www.LaoAmericanAssociation.org) ກໍໄດ້.

ຖ້າທ່ານບໍ່ຈ່າຍ ພາຍໃນ 30 ວັນ ສະມາຄົມຈະສົ່ງໜັງສືໄປເຕືອນ <u>ພ້ອມທັງຄ່າໄໝ ຈ່າຍຊ້າ 100 %</u> **<u>ຊຶ່ງຈະແຈ້ງຢູ່ໃນໜັງສືເຕືອນ.ຖ້າທ່ານບໍ່ຈ່າຍ ພາຍໃນ 30 ວັນ ຫລັງຈາກໄດ້ອອກໜັງສືເຕືອນ. ຄອບຄົວຂອງທ່ານ ຈະຖືກລຶບຊື່ອອກຈາກບັນຊີສະມາຊິກຂອງສະມາຄົມ. ຖ້າທ່ານຕ້ອງການ ເປັນສະມາຊິກອີກ ກໍຈະພິຈາຣະນາ. ແຕ່ຕ້ອງປະກອບຄໍາຮ້ອງ ຂໍເຂົ້າເປັນສະມາຊິກໃໝ່ ໂດຍປະຕິບັຕຕາມກົດລະບຽບ ຂໍ້</u>**

- **<u>ຍ້າຍທີ່ຢູ່ ແລະ ປ່ຽນເລກໝາຍໂທຣະສັພ</u>** ບໍ່ແຈ້ງ ໃຫ້ສະມາຄົມຊາບ ພາຍໃນ 2 ອາທິຕ ຈະຖືກໄໝ $20 ຖ້າບໍ່ຈ່າຍຄ່າໄໝ. ທາງສະມາຄົມຈະລຶບຊື່ຄອບຄົວຂອງທ່ານ ອອກຈາກ ບັນຊີສະມາຊິກສະມາຄົມ ຫລັງຈາກໄດ້ສົ່ງໜັງສືໄປເຕືອນທ່ານ ຢ່າງເປັນທາງການແລ້ວ 1 ເດືອນ.
- **<u>ກົດລະບຽບດັ່ງກ່າວ</u>** ຈະມີຜົລໃຊ້ປະຕິບັຕ ຕັ້ງແຕ່ວັນ ທີ່ 1 ທັນວາ 2007 (December 1, 2007) ເປັນຕົ້ນໄປ ຈຶ່ງໄດ້ແຈ້ງມາເພື່ອຮັບ ຊາບ ແລະ ປະຕິບັຕຕາມ.

ສະວັນນິມິຕ ອະພັຍ

ປະທານສມະມາຄົມລາວອະເມຣິກັນ